ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ...05....../ນຍ
ນະຄອນຫຼວງວຽງຈັນ, ວັນທີ.08...05...2018

# ຄໍາສັ່ງ

## ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ

**ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ.**

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ເລກທີ 17/ສພຊ, ລົງວັນທີ 10 ກໍລະກົດ 2012;
- ອີງຕາມ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍ ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ;
- ອີງຕາມ ໜັງສືສະເໜີຂອງກະຊວງ ກະສິກໍາ ແລະ ປ່າໄມ້ ເລກທີ 32/ກປ, ລົງວັນທີ 27 ເມສາ 2018.

ເພື່ອເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ການກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ທີ່ໃກ້ຈະສູນພັນ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ລັດຖະບານໄດ້ວາງອອກ ແລະ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ Convention on International Trade in Endangered Species of Wild Fauna and Flora (CTIES) ທີ່ ສປປ ລາວ ເປັນພາຄີ ໃຫ້ມີຜົນສັກສິດ, ທັງເປັນການສະກັດກັ້ນ, ການຕ້ານ ແລະ ການແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

1. ໃຫ້ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ໃຫ້ຖືກຕ້ອງຕາມ ລະບຽບກົດໝາຍ ໂດຍສະເພາະແມ່ນ ບັນດາກົດໝາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງ, ກວດກາ ແລະ ດໍາເນີນຄະດີ ກ່ຽວກັບ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ.

2. ໃຫ້ຢຸດຕິ ການລ່າສັດປ່າທຸກປະເພດທີ່ນອນໃນບັນຊີຫວງຫ້າມ (ບັນຊີ I) ແລະ ໃຫ້ຢຸດຕິ ການນໍາເຂົ້າ, ນໍາຜ່ານ, ສົ່ງອອກ, ການຊື້-ຂາຍ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ທີ່ມີຊີວິດ ແລະ ບໍ່ມີຊີວິດ ລວມທັງສິ້ນສ່ວນ, ອະໄວຍະວະ ແລະ ຜະລິດຕະພັນຕ່າງໆ ຂອງສັດປ່າ ປະເພດຫວງຫ້າມ (ບັນຊີ I) ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES), ສໍາລັບສັດປ່າທີ່ນອນໃນບັນຊີຄຸ້ມຄອງ (ບັນຊີ II) ກໍ່ຕ້ອງໄດ້ຄຸ້ມຄອງຢ່າງເຂັ້ມງວດຕາມກົດໝາຍ ແລະ ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍ ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ.
3. ໃຫ້ຢຸດຕິການສ້າງຕັ້ງຟາມ ສັດປ່າປະເພດຫວງຫ້າມ (ບັນຊີ I) ເພື່ອເປົ້າໝາຍທາງດ້ານທຸລະກິດ, ຟາມທີ່ມີແລ້ວໃຫ້ຫັນໄປສູ່ການລ້ຽງແບບເປັນຟາມເປີດ (SAFARI) ຫຼື ສວນສັດ (ZOO) ເພື່ອເປົ້າໝາຍການທ່ອງທ່ຽວແບບອະນຸລັກ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດເທົ່ານັ້ນ, ການສ້າງຕັ້ງຟາມສັດປ່າປະເພດຄຸ້ມຄອງ (ບັນຊີ II) ແລະ ປະເພດທົ່ວໄປ (ບັນຊີ III) ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງກະສິກໍາ ແລະ ປ່າໄມ້ ບົນພື້ນຖານຕ້ອງມີເອກະສານຕົ້ນຕໍຄື: ບົດລາຍງານແຜນຄຸ້ມຄອງຄວາມສ່ຽງໃນການສູນພັນ ຂອງຊະນິດພັນສັດປ່າດັ່ງກ່າວ, ບົດວິພາກເສດຖະກິດເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມທໍາມະຊາດ.
4. ຫ້າມບໍ່ໃຫ້ມີການຊື້ຂາຍ ແລະ ສົ່ງອອກ-ນໍາເຂົ້າ ພືດປ່າປະເພດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.
5. ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການຄົ້ນຄວ້າ ສົ່ງເສີມ ການຂະຫຍາຍພັນພືດປ່າ ປະເພດຫວງຫ້າມ ແລະ ການຄຸ້ມຄອງບັນດາສວນພືດປ່າປະເພດຫວງຫ້າມ.
6. ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຄື:
    6.1. ດໍາເນີນການສໍາຫຼວດຂຶ້ນບັນຊີ ແລະ ຂຶ້ນທະບຽນ ສັດປ່າ ທີ່ນໍາມາລ້ຽງ ລວມທັງສິ້ນສ່ວນ ແລະ ຜະລິດຕະພັນຈາກງາຊ້າງ, ກະດູກຊ້າງ ແລະ ນໍແຮດ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີໄວ້ໃນຄອບຄອງ. ສ່ວນຜະລິດຕະພັນຈາກ ງາຊ້າງ, ກະດູກຊ້າງ ແລະ ນໍແຮດ ທີ່ລອກຮຽນແບບ ຫຼື ເປັນຂອງປອມ ຊຶ່ງມີວາງຂາຍຕາມສະຖານທີ່ຕ່າງໆ ແມ່ນໃຫ້ດໍາເນີນການກວດກາ, ຢຶດ ແລະ ທໍາລາຍຖິ້ມ.
    6.2. ໃຫ້ສືບຕໍ່ກວດກາ, ເກັບກາ, ຂຶ້ນບັນຊີ, ຮິບໂຮມ ອາວຸດລ່າເນື້ອ, ເຄື່ອງມືລ່າສັດທຸກຊະນິດ ເພື່ອທໍາລາຍຖິ້ມ; ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຜະລິດ, ຄອບຄອງ ແລະ ຈໍາໜ່າຍ ອາວຸດລ່າເນື້ອ ແລະ ເຄື່ອງມືລ່າສັດທີ່ມີລັກສະນະດັບສູນທຸກຊະນິດ.
    6.3. ເຂັ້ມງວດໃນການກວດກາ ລາດຕະເວນຕາມເຂດຊາຍແດນທີ່ຫຼໍ່ແຫຼມ, ດ່ານຂາເຂົ້າ-ຂາອອກ, ເຂດເສດຖະກິດພິເສດ ທີ່ມີເປົ້າໝາຍ ແລະ ເຂດອື່ນໆ; ຖ້າມີການລະເມີດ ຫຼື ການກະທໍາຜິດ ກ່ຽວກັບການຄ້າຂາຍ, ເຄື່ອນຍ້າຍ ສັດປ່າ, ສິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າທີ່ຜິດກົດໝາຍ ແລະ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ແມ່ນໃຫ້ດໍາເນີນການສືບສວນ-ສອບສວນ ເພື່ອດໍາເນີນຄະດີຕໍ່ຜູ້ກະທໍາຜິດ, ໃນກໍລະນີມີການຢຶດຂອງກາງ ເພື່ອດໍາເນີນຄະດີ ຕ້ອງມອບໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ດໍາເນີນການ

ສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53, 54 ແລະ 79 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 59, 60, 61 ຂອງກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ. ສຳລັບຂອງກາງທີ່ຍຶດມາເປັນຂອງລັດ ຖ້າເປັນສັດປ່າຍັງມີຊີວິດ ຫຼື ສິ້ນສ່ວນສັດປ່າ ທີ່ສາມາດເກັບຮັກສາໄວ້ພາຍຫຼັງການດຳເນີນຄະດີສຳເລັດ ຕ້ອງມອບໃຫ້ຂະແໜງກະສິກຳ ແລະ ປ່າໄມ້ (ຂະແໜງຄຸ້ມຄອງສົນທິສັນຍາສາກົນ CITES) ເປັນຜູ້ເກັບກຳຮັກສາ (ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ແລະ ມາດຕາ 13 ຂອງສົນທິສັນຍາສາກົນ CITES) ຖ້າເປັນສິ້ນສ່ວນທີ່ບໍ່ມີຊີວິດ ຫຼື ສິ້ນສ່ວນສັດປ່າ ທີ່ບໍ່ສາມາດເກັບຮັກສາໄວ້ໄດ້ (ອາດຈະບູດເນົ່າເສຍຫາຍ) ຕ້ອງໄດ້ທຳລາຍຖິ້ມ.

6.4. ເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ການກວດກາ, ການຕ້ານ ແລະ ສະກັດກັ້ນການລ່າ, ການຊື້-ຂາຍ, ການເຄື່ອນຍ້າຍ, ການນຳເຂົ້າ, ການສົ່ງອອກ, ສົ່ງອອກຄືນ, ການນຳຜ່ານ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ (ບັນຊີ I) ແລະ ປະເພດຄຸ້ມຄອງ (ບັນຊີ II) ທີ່ມີຊີວິດ ແລະ ບໍ່ມີຊີວິດ ລວມທັງສິ້ນສ່ວນ, ອະໄວຍະວະ ແລະ ຜະລິດຕະພັນຕ່າງໆ ຈາກສັດປ່າ ຕາມທີ່ກຳນົດໄວ້ໃນ ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບ ສັດນ້ຳ ແລະ ສັດປ່າ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍ ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES).

7. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນການກວດກາ, ຂຶ້ນບັນຊີເປົ້າໝາຍ ຫ້າງຮ້ານ ແລະ ຢຸດຕິການຄ້າຂາຍ ສິ້ນສ່ວນສັດປ່າ ເຊັ່ນ: ກະດູກ, ໜັງ, ເຂົາ, ງາ, ນໍ, ແຂ້ວ, ເລັບ, ໜວດ, ບີ ແລະ ອື່ນໆ ລວມທັງຜະລິດຕະພັນ ແລະ ຂອງທີ່ລະລຶກທີ່ເຮັດດ້ວຍສິ້ນສ່ວນສັດປ່າທຸກປະເພດ ຢູ່ບັນດາຕະຫຼາດ, ໂຮງແຮມ, ເຂດເສດຖະກິດພິເສດ, ເຂດທ່ອງທ່ຽວ, ສະໜາມບິນ, ດ່ານຂາເຂົ້າ-ຂາອອກ ລະຫວ່າງປະເທດ ແລະ ສະຖານທີ່ອື່ນໆ.

8. ໃຫ້ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຊີ້ນຳສາຍຕັ້ງຂອງຕົນ ເພີ່ມທະວີຄວາມເຂັ້ມງວດ ໃນການກວດກາ ການສົ່ງອອກ, ການນຳເຂົ້າ ສັດປ່າ ແລະ ພືດປ່າ ຢູ່ຕາມບັນດາດ່ານຕ່າງໆ ແລະ ຕາມຊາຍແດນລະຫວ່າງປະເທດ, ຫ້າມເຈົ້າໜ້າທີ່ອະນຸຍາດ ຫຼື ອຳນວຍຄວາມສະດວກໃນການສົ່ງອອກ, ນຳເຂົ້າ ສັດປ່າ ແລະ ພືດປ່າ ທີ່ກຳນົດໄວ້ໃນ ຂໍ້ 3 ຂອງຄຳສັ່ງ ສະບັບນີ້ຢ່າງເດັດຂາດ. ຖ້າກວດກາພົບເຫັນມີການລັກລອບ ແມ່ນໃຫ້ຈັບຕົວຜູ້ກະທຳຜິດ ພ້ອມທັງຍຶດຂອງກາງ ແລ້ວສົ່ງໃຫ້ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ດຳເນີນຄະດີຕາມ ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

9. ໃຫ້ກະຊວງການເງິນ ຊີ້ນຳເຈົ້າໜ້າທີ່ພາສີ ເພີ່ມທະວີຄວາມເຂັ້ມງວດ, ໃນການກວດກາ, ການຕ້ານ ແລະ ສະກັດກັ້ນ, ການຊື້-ຂາຍ, ການເຄື່ອນຍ້າຍ, ການນຳເຂົ້າ, ການສົ່ງອອກ, ສົ່ງອອກຄືນ, ການນຳຜ່ານ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ (ບັນຊີ I) ແລະ ປະເພດຄຸ້ມຄອງ (ບັນຊີ II) ທີ່ມີຊີວິດ ແລະ ບໍ່ມີຊີວິດ ລວມທັງສິ້ນສ່ວນ, ອະໄວຍະວະ ແລະ ຜະລິດຕະພັນຕ່າງໆ ຈາກສັດປ່າ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍ ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES). ຖ້າກວດກາພົບເຫັນມີການລັກລອບ ແມ່ນໃຫ້ຈັບຕົວຜູ້ກະທຳຜິດ ພ້ອມທັງຍຶດຂອງກາງ ແລ້ວສົ່ງໃຫ້ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ດຳເນີນຄະດີຕາມ ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

10. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີຄວາມເອົາໃຈໃສ່ ໂຄສະນາ, ເຜີຍແຜ່ລະບຽບກົດໝາຍທີ່ກ່ຽວຂ້ອງ ໂດຍສະເພາະແມ່ນກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES).
11. ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນເຈົ້າການສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນການສຶກສາ ຊະນິດພັນ ພືດ ແລະ ສັດ ທີ່ນອນໃນບັນຊີ CITES ເພື່ອໃຫ້ກຳໄດ້ສະຖານະພາບຂອງແຕ່ລະຊະນິດພັນ ໂດຍສະເພາະ ຊະນິດພັນທີ່ ສປປ ລາວ ມີທ່າແຮງ ໃນການຄ້າຂາຍ ພ້ອມທັງສ້າງແຜນການຄຸ້ມຄອງຄວາມສ່ຽງໃນການສູນພັນ ເພື່ອເປັນຂໍ້ມູນລາຍງານກອງເລຂາອົງການ CITES.
12. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເອົາໃຈໃສ່ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ຂອງຂະແໜງການ ທີ່ຮັບຜິດຊອບວຽກງານຄຸ້ມຄອງ (CITES MA) ແລະ ຢັ້ງຢືນທາງດ້ານວິທະຍາສາດ (CITES SA) ຕາມສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ໃຫ້ມີຄວາມເຂັ້ມແຂງ ແລະ ມີການປະສານສົມທົບກັນປະຕິບັດວຽກງານໃຫ້ມີປະສິດທິຜົນ.
13. ໃຫ້ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ປັບປຸງ ກົນໄກປະສານງານ ໃນການຄຸ້ມຄອງກວດກາ ຕິດຕາມ ການຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES).
14. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບ ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງໂປ່ງໃສ ແລະ ເຂັ້ມງວດ ແລ້ວລາຍງານລັດຖະບານເປັນແຕ່ລະໄລຍະ ເພື່ອໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານໃຫ້ທັນກັບສະພາບການ.
15. ໃຫ້ບັນດາ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງ ກຳແໜ້ນຄຳສັ່ງສະບັບນີ້, ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດ ຕາມຄວາມຮັບຜິດຊອບຂອງຕົນໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ, ກໍລະນີຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນຄະນະນຳ ຂອງຂະແໜງການນັ້ນ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບ ຕໍ່ລັດຖະບານ ແລະ ຕໍ່ກົດໝາຍ.
16. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ລວມທັງບັນດານິຕິກຳ ທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ອອກໃນໄລຍະຜ່ານມາ ທີ່ມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ